ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0075 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 13 ມັງກອນ 2012

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າ ແລະ ການຈຳໜ່າຍລົດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍ ວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມດຳລັດວ່າດ້ວຍ ການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011; ແລະ
- ອີງຕາມດຳລັດ ວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009,

ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດລະບຽບການຂໍອະນຸຍາດນຳເຂົ້າ ແລະ ຈຳໜ່າຍລົດ ຢູ່ ສປປ ລາວ. ຂໍ້ຕົກລົງສະບັບນີ້ບໍ່ໄດ້ນຳໃຊ້ເພື່ອຈຸດປະສົງໃນການຈຳກັດປະລິມານ ຫຼື ມູນຄ່າໃນການນຳເຂົ້າ ແຕ່ເພື່ອຈຸດປະສົງໃນການເກັບກຳຂໍ້ມູນສະຖິຕິໃນການນຳເຂົ້າລົດ, ໂດຍຜ່ານລະບອບການອອກໃບອະນຸຍາດນຳເຂົ້າແບບອັດຕະໂນມັດ.

### ມາດຕາ 2. ອະທິບາຍຄຳສັບ

ໃນຂໍ້ຕົກລົງສະບັບນີ້ "ລົດ" ໝາຍເຖິງພາຫະນະທາງບົກຂັບເຄື່ອນດ້ວຍເຄື່ອງຈັກທຸກປະເພດ ຊຶ່ງໄດ້ລະບຸໄວ້ ໃນປຶ້ມສາລະບານອັດຕາພາສີຂອງ ສປປ ລາວ ດັ່ງ ນີ້: 8701.20; 8701.30.20; 8701.90; 8702; 8703; 8704; 8705 ແລະ 8711. ຍົກເວັ້ນລົດບັນທຸກເບົາຂະນິດ 3 ລໍ້ (8704.31.17).

### ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ ການນຳເຂົ້າ ແລະ ການຈຳໜ່າຍລົດ ຢູ່ ສປປ ລາວ.

## ໝວດທີ 2
## ສິດ ແລະ ເງື່ອນໄຂໃນການນໍາເຂົ້າ ແລະ ຈໍາໜ່າຍລົດ

### ມາດຕາ 4. ສິດ ແລະ ເງື່ອນໄຂໃນການນໍາເຂົ້າລົດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ມີສິດນໍາເຂົ້າລົດ ໂດຍປະຕິບັດຕາມ ລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

### ມາດຕາ 5. ສິດ ແລະ ເງື່ອນໄຂໃນການຈໍາໜ່າຍລົດ

ມີແຕ່ ຜູ້ທີ່ຂຶ້ນທະບຽນວິສາຫະກິດຈໍາໜ່າຍລົດ ພາຍໃຕ້ກົດໝາຍຂອງ ສປປ ລາວ ເທົ່ານັ້ນທີ່ ມີສິດຈໍາໜ່າຍລົດຢູ່ ສປປ ລາວ.

ວິສາຫະກິດຈໍາໜ່າຍລົດ ຕ້ອງປະຕິບັດຕາມ ຂໍ້ບັງຄັບດັ່ງນີ້:

1. ເປັນຕົວແທນຈໍາໜ່າຍລົດ ຈາກຜູ້ຜະລິດລົດ ຫຼື ສາຂາຂອງຜູ້ຜະລິດລົດຍີ່ຫໍ້ໃດໜຶ່ງ;
2. ມີຮ້ານວາງສະແດງ ຫຼື ຮ້ານຈໍາໜ່າຍລົດ; ແລະ
3. ມີສູນບໍລິການຫຼັງການຂາຍລົດ.

## ໝວດທີ 3
## ລະບຽບການຂໍອະນຸຍາດນໍາເຂົ້າລົດ

### ມາດຕາ 6. ການຂໍອະນຸຍາດນໍາເຂົ້າລົດ

ການນໍາເຂົ້າລົດຕ້ອງໄດ້ຮັບໃບອະນຸຍາດນໍາເຂົ້າລົດ ຈາກ ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ.

### ມາດຕາ 7. ເອກະສານປະກອບຂໍອະນຸຍາດນໍາເຂົ້າລົດ

ເອກະສານທີ່ຕ້ອງປະກອບເພື່ອຂໍອະນຸຍາດນໍາເຂົ້າລົດ ມີດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດນໍາເຂົ້າລົດ;
2. ສໍາເນົາຂອງເອກະສານຕາມແຕ່ລະກໍລະນີດັ່ງນີ້:
   - ໃບທະບຽນວິສາຫະກິດ ຫຼື ໃບທະບຽນສໍາປະທານທີ່ຍັງໃຊ້ໄດ້ (ສໍາລັບວິສາຫະກິດທີ່ ຢູ່ ສປປ ລາວ); ຫຼື
   - ເອກະສານຂຶ້ນທະບຽນດໍາເນີນທຸລະກິດ ອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງທີ່ຍັງໃຊ້ໄດ້ (ສໍາລັບວິສາຫະກິດທີ່ບໍ່ຢູ່ ສປປ ລາວ).

ເອກະສານທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຈາກ ສໍານັກງານທະບຽນສານຂອງ ສປປ ລາວ.

มาດຕາ 8. ໃບອະນຸຍາດນຳເຂົ້າລົດ

ການອອກ, ການປ່ຽນແປງ ແລະ ອາຍຸ ຂອງ ໃບອະນຸຍາດນຳເຂົ້າລົດ ໃຫ້ປະຕິບັດຕາມດຳລັດ 180/ນຍ ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການ ອອກໃບອະນຸຍາດນຳເຂົ້າສິນຄ້າ. ໃບອະນຸຍາດນຳເຂົ້າລົດບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

ມາດຕາ 9. ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກ ແລະ ການປ່ຽນແປງ ຂອງ ໃບອະນຸຍາດນຳເຂົ້າລົດແມ່ນໃຫ້ອີງຕາມລັດຖະບັນຍັດ ສະບັບເລກທີ 03/ປປທ ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

ມາດຕາ 10. ການສະໜອງເອກະສານໃນເວລານຳເຂົ້າລົດຕົວຈິງ

ໃນເວລານຳເຂົ້າຕົວຈິງ, ຜູ້ນຳເຂົ້າຕ້ອງສະແດງເອກະສານດັ່ງຕໍ່ໄປນີ້ໃຫ້ແກ່ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າລົດທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້; ແລະ
2. ເອກະສານອື່ນໆຕາມລະບຽບການຂອງພາສີ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

ມາດຕາ 11. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

ມາດຕາ 12. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 30 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການນຳເຂົ້າ ແລະ ການຈຳໜ່າຍລົດ ຢູ່ ສປປ ລາວ ສະບັບເລກທີ 0919/ອຄ.ກຂອ, ລົງວັນທີ 12 ພຶດສະພາ 2009.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ

ບ່ອນສົ່ງ:

- ຫ້ອງວ່າການລັດຖະບານ;
- ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ;
- ກົມພາສີ, ກະຊວງການເງິນ;
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ;
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ